LAO STATISTICS BUREAU

ກະຊວງແຜນການ ແລະ ການລົງທຶນ
ສູນສະຖິຕິແຫ່ງຊາດ

# ຄາດຄະເນພົນລະເມືອງລະດັບເມືອງ

# 2015-2035



ສະໜັບສະໜູນໂດຍ: ອົງການສະຫະປະຊາຊາດ ກອງທຶນສໍາລັບປະຊາກອນ

UNFPA

ນະຄອນຫຼວງວຽງຈັນ, ກັນຍາ 2019

## ຄະນະຮັບຜິດຊອບການຄາດຄະເນພົນລະເມືອງລະດັບເມືອງປີ 2015-2035

### ຄະນະຮັບຜິດຊອບຊີ້ນຳລວມ

1. ທ່ານ ປອ ສະໄໝຈັນ ບຸບຜາ ຫົວໜ້າສູນສະຖິຕິແຫ່ງຊາດ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ
2. ທ່ານ ນ. ພອນສະຫຼີ ສຸກສະຫວັດ ຮອງຫົວໜ້າສູນສະຖິຕິແຫ່ງຊາດ

### ຄະນະຮັບຜິດຊອບຊີ້ນຳດ້ານວິຊາການ

1. ທ່ານ ນ. ທິລະດາ ຈັນທະລານຸວົງ ຫົວໜ້າກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ
2. ທ່ານ ນ. ພວງມາລາ ລາຊາສີ ຮອງຫົວໜ້າພະແນກທະບຽນສະຖິຕິ, ກົມສະຖິຕິສັງຄົມ

### ວິຊາການຮັບຜິດຊອບການຄາດຄະເນ

1. ທ່ານ ບຸນປັນ ອິນທະວົງທອງ ວິຊາການພະແນກທະບຽນສະຖິຕິ, ກົມສະຖິຕິສັງຄົມ

**ສະໜັບສະໜູນໂດຍ:** ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UNFPA)

# ຄຳນຳ

ການຄາດຄະເນພົນລະເມືອງໃນຕໍ່ໜ້າ ແມ່ນມີຄວາມສຳຄັນຫຼາຍສຳລັບວຽກງານນຸ້ມຄອງ-ບໍລິຫານ ໃຫ້ປະສິດທິພາບ ແລະ ປະສິດທິຜົນສູງ. ຖ້າການຄາດຄະເນຈຳນວນພົນລະເມືອງໃນຕໍ່ໜ້າມີຄວາມຊັດເຈນ ຈະເຮັດໃຫ້ລັດຖະບານກໍ່ຄືບັນດານັກວາງແຜນນະໂຍບາຍ ສາມາດວາງນະໂຍບາຍ ແລະ ສ້າງແຜນການພັດທະນາຕ່າງໆກ່ຽວກັບການສະໜອງການບໍລິການ ແລະ ສະຫວັດດີການສັງຄົມແກ່ປະຊາຊົນໃຫ້ມີປະສິດທິພາບດີຂຶ້ນ. ການກຳນົດນະໂຍບາຍ ແລະ ແຜນພັດທະນາທີ່ດີ ແລະ ມີຄຸນນະພາບ ແມ່ນມີຄວາມ ເປັນໄປໄດ້ສູງ ຖ້າອີງໃສ່ຈຳນວນພົນລະເມືອງໃນຕໍ່ໜ້າ. ຍ້ອນມີຄວາມສຳຄັນ ແລະ ຈຳເປັນຄືແນວນັ້ນ ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ຈຶ່ງໄດ້ດຳເນີນການຄາດຄະເນພົນລະເມືອງລະດັບເມືອງ ໂດຍນຳໃຊ້ຂໍ້ມູນພົນລະເມືອງປີຖານຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ 4 ປີ 2015.

ການຄາດຄະເນພົນລະເມືອງ ເປັນການຄິດໄລ່ຂະໜາດ ແລະ ຄຸນລັກສະນະຂອງພົນລະເມືອງໃນຕໍ່ໜ້າ. ເຖິງແມ່ນວ່າຈະນຳໃຊ້ວິທີການຄາດຄະເນທີ່ດີທີ່ສຸດກໍ່ຕາມ ແຕ່ກໍ່ບໍ່ສາມາດຮັບປະກັນຄວາມຖືກຕ້ອງໄດ້ຮ້ອຍສ່ວນຮ້ອຍ. ສະນັ້ນ, ສູນສະຖິຕິແຫ່ງຊາດ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ມີການເກັບກຳຂໍ້ມູນພົນລະເມືອງເພື່ອປັບປຸງການຄາດຄະເນພົນລະເມືອງໃນແຕ່ລະໄລຍະ ເພື່ອເຮັດໃຫ້ຂໍ້ມູນພົນລະເມືອງຈາກການຄາດຄະເນໃຫ້ມີຄວາມໃກ້ຄຽງທີ່ສຸດກັບຂະໜາດພົນລະເມືອງຕົວຈິງໃນຕໍ່ໜ້າ ໂດຍອີງຕາມຂໍ້ມູນທີ່ໄດ້ຈາກການສຳຫຼວດຕົວແທນຕ່າງໆ ເປັນຕົ້ນແມ່ນການສຳຫຼວດດັດສະນີໝາຍສັງຄົມລາວ ແລະ ການສຳຫຼວດອື່ນໆທີ່ເຫັນວ່າມີຄວາມເໝາະສົມ ແລະ ພຽງພໍສຳລັບການຄາດຄະເນພົນລະເມືອງ.

ສຸດທ້າຍນີ້, ຫວັງຢ່າງຍິ່ງວ່າການນຳຂັ້ນສູນກາງ ແລະ ທ້ອງຖິ່ນ, ນັກວາງແຜນນະໂຍບາຍການພັດທະນາ ແລະ ຜູ້ຊົມໃຊ້ຂໍ້ມູນທົ່ວໄປ ຈະສາມາດນຳໃຊ້ຂໍ້ມູນຜົນຂອງການຄາດຄະເນພົນລະເມືອງລະດັບເມືອງໃນຄັ້ງນີ້ ເຂົ້າໃນການສ້າງນະໂຍບາຍ, ສ້າງແຜນພັດທະນາ ແລະ ຕິດຕາມແຜນການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ການບໍລິການສັງຄົມໃນຂອບເຂດທົ່ວປະເທດໃຫ້ດີຂຶ້ນເທື່ອລະກ້າວ. ພ້ອມກັນນັ້ນ ສູນສະຖິຕິແຫ່ງຊາດ ຂໍສະແດງຄວາມຂອບໃຈມາຍັງອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UNFPA) ທີ່ໃຫ້ການສະໜັບສະໜູນທາງດ້ານງົບປະມານ ໃນການຄາດຄະເນພົນລະເມືອງໃຫ້ສຳເລັດຜົນຕາມລຳດັບຄາດໝາຍ ແລະ ຫວັງວ່າອົງການ (UNFPA) ຈະໄດ້ສືບໃຫ້ການສຳໜັບສະໜູນສູນສະຖິຕິແຫ່ງຊາດ ໃນການຜະລິດ ແລະ ເຜີຍແຜ່ຂໍ້ມູນສະຖິຕິຕະຫຼອດໄປ.

**ຫົວໜ້າສູນສະຖິຕິແຫ່ງຊາດ**

**ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ**

# ສາລະບານ

ຄຳນຳ ... III

ພາກທີ 1. ພາກສະເໜີ ... 1

  ສະພາບລວມ 1.1 ... 1

  ຈຸດປະສົງ 1.2 ... 2

ພາກທີ 2. ວິທີການ ແລະ ການກະກຽມຂໍ້ມູນ ... 3

  ຜົນລະເມືອງປີຖານ 2.1 ... 3

  ລະດັບການຈະເລີນພັນ 2.2 ... 4

  ການກຳນົດສົມມຸດຖານ 2.3 ... 5

ພາກທີ 3. ຜົນການຄາດຄະເນ ... 6

  ນະຄອນຫຼວງວຽງຈັນ 3.1 ... 7

  3.2 ແຂວງຜົ້ງສາລີ ... 22

  3.3 ແຂວງຫຼວງນໍ້າທາ ... 34

  3.4 ແຂວງອຸດົມໄຊ ... 43

  3.5 ແຂວງບໍ່ແກ້ວ ... 55

  3.6 ແຂວງຫຼວງພະບາງ ... 64

  3.7 ແຂວງຫົວພັນ ... 83

  3.8 ແຂວງໄຊຍະບູລີ ... 98

  3.9 ແຂວງຊຽງຂວາງ ... 115

  3.10 ແຂວງວຽງຈັນ ... 127

  3.11 ແຂວງບໍລິຄຳໄຊ ... 144

  3.12 ແຂວງຄຳມ່ວນ ... 156

  3.13 ແຂວງສະຫວັນນະເຂດ ... 171

  314. ແຂວງສາລະວັນ ... 193

  3.15 ແຂວງເຊກອງ ... 206

  3.16 ແຂວງຈຳປາສັກ ... 214

  3.17 ແຂວງອັດຕະປື ... 229

  3.18 ແຂວງໄຊສົມບູນ ... 238

ພາກທີ 4. ສັງລວມ ແລະ ສະຫຼຸບຫຍໍ້ ... 247

# ພາກທີ 1. ພາກສະເໜີ

## 1.1 ສະພາບລວມ

ລັດຖະບານແຫ່ງ ສປປ ລາວ ໄດ້ຈັດຕັ້ງປະຕິບັດການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ IV ໃນເດືອນມີນາ ປີ 2015 ໂດຍສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ພາຍໃຕ້ການຕົກລົງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ. ການສໍາຫຼວດດັ່ງກ່າວແມ່ນມີຈຸດປະສົງເພື່ອເກັບກໍາຂໍ້ມູນພື້ນຖານກ່ຽວກັບພົນລະເມືອງ ແລະ ທີ່ຢູ່ອາໄສ ໃນຂອບເຂດທົ່ວປະເທດ ຊຶ່ງເປັນຂໍ້ມູນທີ່ມີຄວາມສໍາຄັນຫຼາຍຕໍ່ກັບການວາງນະໂຍບາຍ, ການວາງແຜນ, ຕິດຕາມ ແລະ ປະເມີນແຜນພັດທະນາເສດຖະກິດ-ສັງຄົມ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ແລະ ຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs).

ຂໍ້ມູນພົນລະເມືອງ ແມ່ນມີຄວາມສໍາຄັນຫຼາຍໃນວຽກງານການຄຸ້ມຄອງພົນລະເມືອງ ແລະ ຕິດຕາມການເຄື່ອນໄຫວຕ່າງໆທີ່ກ່ຽວຂ້ອງກັບພົນລະເມືອງ, ໃນການວາງນະໂຍບາຍດ້ານປະຊາກອນ ແລະ ສ້າງແຜນພັດທະນາຕ່າງໆ. ໂດຍປົກກະຕິແລ້ວຂໍ້ມູນພົນລະເມືອງແມ່ນໄດ້ມາຈາກລະບົບລາຍງານບໍລິຫານ, ການຂຶ້ນທະບຽນພົນລະເມືອງ ແລະ ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ສໍາລັບໃນ ສປປ ລາວ ລະບົບລາຍງານຂໍ້ມູນພົນລະເມືອງແບບລາຍງານບໍລິຫານ ແມ່ນຍັງຢູ່ໃນຂັ້ນຕອນການປັບປຸງລະບົບການເກັບກໍາຂໍ້ມູນ ຊຶ່ງຍັງບໍ່ທັນມີຂໍ້ມູນພົນລະເມືອງທີ່ເປັນທາງການ ຈາກການເກັບກໍາຈາກລະບົບດັ່ງກ່າວ ແລະ ການຂຶ້ນທະບຽນພົນລະເມືອງກໍ່ຍັງບໍ່ທັນເປັນລະບົບຈະແຈ້ງເທື່ອ. ສະນັ້ນ, ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຈຶ່ງເປັນແຫຼ່ງຂໍ້ມູນດຽວທີ່ມີຂໍ້ມູນລະອຽດລະດັບບຸກຄົນ ແລະ ຄົວເຮືອນ ແຕ່ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ແມ່ນໄດ້ຈັດຕັ້ງປະຕິບັດໃນທຸກໆ 10 ປີ.

ໃນໄລຍະຜ່ານມານີ້ ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ ໄດ້ຈັດຕັ້ງປະຕິບັດການຄາດຄະເນພົນລະເມືອງລະດັບຊາດ ແລະ ລະດັບແຂວງ ຊຶ່ງໄດ້ປະກາດໃຊ້ໂດຍຫົວໜ້າສູນສະຖິຕິແຫ່ງຊາດ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໃນກອງປະຊຸມວັນສະຖິຕິລາວ ວັນທີ 27 ມິຖຸນາ 2018. ການຄາດຄະເນພົນລະເມືອງດັ່ງກ່າວແມ່ນມີໄລຍະເວລາແຕ່ປີ 2015-2045 ແລະ ສາມາດນໍາໃຊ້ໄດ້ຮອດແຕ່ລະດັບແຂວງເທົ່ານັ້ນ ແຕ່ຍັງບໍ່ສາມາດນໍາໃຊ້ໄດ້ຮອດລະດັບເມືອງເທື່ອ. ຍ້ອນບໍ່ມີຂໍ້ມູນພົນລະເມືອງຈາກລະບົບລາຍງານບໍລິຫານ ແລະ ການຂຶ້ນທະບຽນພົນລະເມືອງ ແຕ່ມີຄວາມຕ້ອງການສູງໃນການນໍາໃຊ້ຂໍ້ມູນໃນລະດັບເມືອງ ໂດຍສະເພາະແມ່ນຂະແໜງສຶກສາທິການ ແລະ ກິລາ, ຂະແໜງສາທາລະນະສຸກ ແລະ

预览已结束，完整报告链接和二维码如下：
https://www.yunbaogao.cn/report/index/report?reportId=5_19729